ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1227 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 31 DEC 2020

# ຂໍ້ຕົກລົງ
# ວ່າດ້ວຍ ສູນສົ່ງເສີມຫັດຖະກຳ

- ອີງຕາມ ກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1759/ກອຫ.ຫຖກ, ລົງວັນທີ 16 ທັນວາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສ້າງຕັ້ງ, ການເຄື່ອນໄຫວ ແລະ ການສົ່ງເສີມ ສູນສົ່ງເສີມຫັດຖະກຳ ໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ ແນໃສ່ສົ່ງເສີມຜະລິດຕະພັນຫັດຖະກຳໃຫ້ມີຄຸນນະພາບ ແລະ ມູນຄ່າເພີ່ມ, ປົກປ້ອງສິດຜົນປະໂຫຍດຂອງຜູ້ປະກອບການ, ຍົກລະດັບວິຊາຊີບໃຫ້ແກ່ຊາວຊ່າງຫັດຖະກຳ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນບັນດາເຜົ່າ ພ້ອມທັງ ສົ່ງເສີມການຮຽນຮູ້, ການສືບທອດອາຊີບ, ການອະນຸລັກຫັດຖະກຳ ທີ່ເປັນມູນເຊື້ອໃຫ້ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ສູນສົ່ງເສີມຫັດຖະກຳ**

ສູນສົ່ງເສີມຫັດຖະກຳ ແມ່ນ ສະຖານທີ່ຝຶກອົບຮົມຍົກລະດັບວິຊາຊີບຫັດຖະກຳ ຕາມທີ່ກຳນົດໄວ້ໃນ ມາດຕາ 37 ຂອງກົດໝາຍວ່າດ້ວຍຫັດຖະກຳ, ເປັນບ່ອນວາງສະແດງ ແລະ ຈຳໜ່າຍສິນຄ້າຫັດຖະກຳ, ຝຶກອົບຮົມ ແລະ ຍົກລະດັບວິຊາຊີບ ທັງເປັນບ່ອນຄົ້ນຄວ້າ, ສາທິດຂັ້ນຕອນການຜະລິດ, ເປີດກອງປະຊຸມວິຊາການ ເພື່ອແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ, ຊື້-ຂາຍ, ຮ່ວມມື ແລະ ຊ່ວຍເຫຼືອລະຫວ່າງຊາວຊ່າງຫັດຖະກຳ

ດ້ວຍກັນ ທັງເປັນທໍພິພິທະພັນເພື່ອການອະນຸລັກ ແນໃສ່ພັດທະນາວຽກງານຫັດຖະກຳໃຫ້ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະ ຍືນຍົງ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານສູນສົ່ງເສີມຫັດຖະກຳຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ

**ມາດຕາ 4 ເງື່ອນໄຂຂອງການສ້າງຕັ້ງສູນສົ່ງເສີມຫັດຖະກຳ**

ການສ້າງຕັ້ງສູນສົ່ງເສີມຫັດຖະກຳ ຕ້ອງມີເງື່ອນໄຂພື້ນຕໍ່ ດັ່ງນີ້:

1. ເຈົ້າຂອງຕ້ອງເປັນພົນລະເມືອງລາວ;
2. ເປັນນິຕິບຸກຄົນທີ່ຂຶ້ນທະບຽນຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ;
3. ມີສະຖານທີ່ຕັ້ງເໝາະສົມ ແລະ ມີເນື້ອທີ່ພຽງພໍ ສຳລັບກິດຈະກຳພື້ນຕໍ່ຂອງສູນສົ່ງເສີມຫັດຖະກຳ ທີ່ກຳນົດໃນ ຂໍ້ 1, 2 ແລະ 3 ຂອງມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;
4. ມີພະນັກງານ ຫຼື ຊາວຊ່າງຫັດຖະກຳ ທີ່ມີຄວາມຊຳນານງານ ໃນຂະແໜງວິຊາຊີບຫັດຖະກຳໃດໜຶ່ງ ທີ່ໄດ້ກຳນົດໃນມາດຕາ 13 ຂອງກົດໝາຍວ່າດ້ວຍຫັດຖະກຳ.

**ມາດຕາ 5 ອົງປະກອບຂອງສູນສົ່ງເສີມຫັດຖະກຳ**

ສູນສົ່ງເສີມຫັດຖະກຳ ຕ້ອງມີອົງປະກອບພື້ນຕໍ່ ດັ່ງນີ້:

1. ມີສະຖານທີ່ຈັດຝຶກອົບຮົມທີ່ສາມາດຮອງຮັບຜູ້ເຂົ້າຮ່ວມຝຶກອົບຮົມແຕ່ ຊາວ ຄົນ ຂຶ້ນໄປ;
2. ມີສະຖານທີ່ທຳການຜະລິດ ຫຼື ສາທິດການຜະລິດ ຢ່າງໜ້ອຍ ສອງຜະລິດຕະພັນຫັດຖະກຳ;
3. ມີສະຖານທີ່ວາງສະແດງ ແລະ ຈຳໜ່າຍ ຜະລິດຕະພັນຫັດຖະກຳ;
4. ມີເຄື່ອງມື, ອຸປະກອນ ຮັບໃຊ້ການດຳເນີນການຜະລິດ ແລະ ສາທິດ.

**ມາດຕາ 6 ຂັ້ນຕອນການສະເໜີສ້າງຕັ້ງສູນສົ່ງເສີມຫັດຖະກຳ**

ການສະເໜີຂໍສ້າງຕັ້ງສູນສົ່ງເສີມຫັດຖະກຳ ມີ ສອງ ຂັ້ນຕອນ ດັ່ງນີ້:

1. ສະເໜີຫາ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ;
2. ສະເໜີຫາ ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອພິຈາລະນາອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ.

### ມາດຕາ 7 ການສະເໜີພິຈາລະນາສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ

ຜູ້ທີ່ມີຈຸດປະສົງສ້າງຕັ້ງສູນສົ່ງເສີມຫັດຖະກຳ ໃຫ້ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ສະເໜີຕໍ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ຈະສ້າງຕັ້ງສູນສົ່ງເສີມຫັດຖະກຳ ເພື່ອຄົ້ນຄວ້າກ່ຽວກັບເງື່ອນໄຂສະຖານທີ່ຕັ້ງ ຕາມທີ່ໄດ້ກຳນົດໃນ ຂໍ້ 3 ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງໄດ້ຮັບໜັງສືສະເໜີ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ຕົວຈິງ ພ້ອມທັງ ເຮັດບົດບັນທຶກການກວດກາ ແລະ ອອກໜັງສືແຈ້ງຕອບຜູ້ສະເໜີພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີຄົບຖ້ວນ ແລະ ຖືກຕ້ອງ.

### ມາດຕາ 8 ເອກະສານປະກອບການສະເໜີພິຈາລະນາສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ

ເອກະສານປະກອບການສະເໜີພິຈາລະນາສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ ມີດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມທີ່ ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;
2. ເອກະສານຢັ້ງຢືນ ກ່ຽວກັບ ສິດນຳໃຊ້ທີ່ດິນສ້າງສູນສົ່ງເສີມຫັດຖະກຳ ເປັນຕົ້ນ ໃບຕາດິນ, ສັນຍາເຊົ່າ ຫຼື ສັນຍາສຳປະທານ.

### ມາດຕາ 9 ການສະເໜີອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ

ພາຍຫຼັງໄດ້ຮັບໜັງສືແຈ້ງຕອບເຫັນດີກ່ຽວກັບສະຖານທີ່ຕັ້ງ ຈາກ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ໃຫ້ຜູ້ສະເໜີສ້າງຕັ້ງສູນສົ່ງເສີມຫັດຖະກຳປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ສະເໜີຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອພິຈາລະນາອອກໃບອະນຸຍາດສ້າງສູນສົ່ງເສີມຫັດຖະກຳ.

### ມາດຕາ 10 ເອກະສານປະກອບການສະເໜີອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ

ເອກະສານປະກອບການສະເໜີ ຂໍອະນຸຍາດສ້າງສູນສົ່ງເສີມຫັດຖະກຳ ມີດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມທີ່ ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ;
4. ໜັງສືແຈ້ງຕອບເຫັນດີກ່ຽວກັບສະຖານທີ່ຕັ້ງ ຈາກ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ພ້ອມດ້ວຍ ເອກະສານຢັ້ງຢືນ ກ່ຽວກັບ ສິດນຳໃຊ້ທີ່ດິນສ້າງສູນສົ່ງເສີມຫັດຖະກຳ ເປັນຕົ້ນ ໃບຕາດິນ, ສັນຍາເຊົ່າ ຫຼື ສັນຍາສຳປະທານ.

### ມາດຕາ 11 ການພິຈາລະນາອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ

ພາຍຫຼັງໄດ້ຮັບເອກະສານຈາກຜູ້ສະເໜີສ້າງຕັ້ງສູນສົ່ງເສີມຫັດຖະກຳ, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງຄົ້ນຄວ້າພິຈາລະນາອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງແຈ້ງໃຫ້ຜູ້ສະເໜີ ເປັນລາຍລັກອັກສອນ ພາຍໃນ ສາມ ວັນລັດຖະການ.

ໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ ສາມາດນຳໃຊ້ໄດ້ຕະຫຼອດໄລຍະເວລາການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ, ແຕ່ຈະມີການປະເມີນ ທຸກໆ ສາມ ປີ. ຖ້າການປະເມີນ ເຫັນວ່າ ມີເງື່ອນໄຂ ຫຼື ອົງປະກອບບໍ່ຄົບຖ້ວນ ຕາມທີ່ກຳນົດໃນມາດຕາ 4 ແລະ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການສູນສົ່ງເສີມຫັດຖະກຳ ປັບປຸງແກ້ໄຂ. ໃນກໍລະນີຫາກບໍ່ປັບປຸງແກ້ໄຂໃຫ້ໄດ້ຕາມເງື່ອນໄຂແມ່ນຈະຖືກ ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ.

## ມາດຕາ 12 ການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ

ສູນສົ່ງເສີມຫັດຖະກຳ ສາມາດດຳເນີນການເຄື່ອນໄຫວ ດັ່ງນີ້:

1. ວາງສະແດງ ແລະ ຈຳໜ່າຍຜະລິດຕະພັນຫັດຖະກຳ ທີ່ຜະລິດຢູ່ ສປປ ລາວ;
2. ຈັດຝຶກອົບຮົມ ຍົກລະດັບວິຊາຊີບຫັດຖະກຳ ເພື່ອພັດທະນາບຸກຄະລາກອນກ່ຽວກັບຜະລິດຕະພັນຫັດຖະກຳ;
3. ຈັດກອງປະຊຸມແລກປ່ຽນບົດຮຽນລະຫວ່າງຊາວຊ່າງຫັດຖະກຳດ້ວຍກັນ;
4. ຄົ້ນຄວ້າ, ທົດລອງ, ສາທິດ, ວິເຄາະ ແລະ ວິໄຈ ເພື່ອພັດທະນາຜະລິດຕະພັນຫັດຖະກຳ;
5. ຜະລິດ ແລະ ຈຳໜ່າຍ ຜະລິດຕະພັນຫັດຖະກຳ;
6. ເຈລະຈາຊື້-ຂາຍ, ຮ່ວມມື ແລະ ຊ່ວຍເຫຼືອລະຫວ່າງຊາວຊ່າງຫັດຖະກຳດ້ວຍກັນ ທັງເປັນຫໍພິພິທະພັນເພື່ອອະນຸລັກຜະລິດຕະພັນຫັດຖະກຳ.

## ມາດຕາ 13 ສິດ ແລະ ພັນທະຂອງ ສູນສົ່ງເສີມຫັດຖະກຳ

ສູນສົ່ງເສີມຫັດຖະກຳ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການປົກປ້ອງສິດຜົນປະໂຫຍດ ແລະ ກຳມະສິດອັນຊອບທຳຂອງຕົນຕາມກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງບໍລິຫານ ແລະ ດຳເນີນການກໍ່ສ້າງສູນສົ່ງເສີມຫັດຖະກຳຕາມແຜນການທີ່ກຳນົດໄວ້;
3. ດຳເນີນກິດຈະກຳຕ່າງໆ ຕາມທີ່ກຳນົດໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
4. ເຂົ້າຮ່ວມງານວາງສະແດງ ແລະ ງານຕະຫຼາດນັດ ທັງພາຍໃນ ແລະ ຕ່າງປະເທດ;
5. ວາງແຜນການໃຫ້ຊາວຊ່າງຫັດຖະກຳ ເຂົ້າມາຝຶກອົບຮົມຢູ່ສູນສົ່ງເສີມຫັດຖະກຳຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມແຕ່ລະໄລຍະ;
6. ປົກປັກຮັກສາຜະລິດຕະພັນຫັດຖະກຳທີ່ເປັນມູນເຊື້ອ, ວັດທະນະທຳຂອງຊາດ ແລະ ເອກະລັກສະເພາະຂອງທ້ອງຖິ່ນໃຫ້ມີຄວາມຍືນຍົງ;
7. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮ່ວມມືໃນການສົ່ງເສີມການຜະລິດຫັດຖະກຳໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານເປັນທີ່ຍອມຮັບຂອງຕະຫຼາດ;
8. ສະຫຼຸບ ແລະ ລາຍງານປະຈຳປີກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງສູນສົ່ງເສີມຫັດຖະກຳໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ສູນຕັ້ງຢູ່.

## ໝວດທີ 3
## ນະໂຍບາຍສົ່ງເສີມສູນສົ່ງເສີມຫັດຖະກຳ

**ມາດຕາ 14 ນະໂຍບາຍສົ່ງເສີມສູນສົ່ງເສີມຫັດຖະກຳ**

ສູນສົ່ງເສີມຫັດຖະກຳ ແມ່ນໜຶ່ງໃນກິດຈະກຳທີ່ລັດສົ່ງເສີມ ເພື່ອພັດທະນາວຽກງານຫັດຖະກຳ ຊຶ່ງກຳນົດໃນມາດຕາ 28 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008 ພ້ອມນີ້ ກໍ່ນອນໃນຂະແໜງການ ທີ່ໄດ້ນະໂຍບາຍສົ່ງເສີມ ຕາມທີ່ກຳນົດໃນມາດຕາ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.

**ມາດຕາ 15 ນະໂຍບາຍດ້ານພາສີ-ອາກອນ**

ການດຳເນີນກິດຈະການສູນສົ່ງເສີມຫັດຖະກຳຈະໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ດັ່ງນີ້:

1. ການຈຳໜ່າຍຜະລິດຕະພັນທີ່ໄດ້ຈາກສູນສົ່ງເສີມຫັດຖະກຳ ແມ່ນໄດ້ຮັບນະໂຍບາຍຍົກເວັ້ນອາກອນຕ່າງໆ ຕາມທີ່ກຳນົດໃນມາດຕາ 38 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;

2. ລາຍໄດ້ທີ່ໄດ້ຈາກການຈັດຝຶກອົບຮົມ, ຄົ້ນຄວ້າ, ທົດລອງ, ສາທິດ, ວິເຄາະ, ວິໄຈ ແລະ ກິດຈະກຳອື່ນໆ ເພື່ອພັດທະນາສິນຄ້າຫັດຖະກຳ ແມ່ນໄດ້ຮັບນະໂຍບາຍຍົກເວັ້ນອາກອນຕ່າງໆ ຕາມທີ່ກຳນົດໃນມາດຕາ 4, 42 ແລະ 68 ຂອງກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015, ແລະ ໃນມາດຕາ 4, 33 ແລະ 34 ຂອງກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;

3. ການນຳເຂົ້າວັດຖຸອຸປະກອນຮັບໃຊ້ການຜະລິດໂດຍກົງ ຢູ່ສູນສົ່ງເສີມຫັດຖະກຳຈະໄດ້ຮັບການຍົກເວັ້ນພາສີ ແລະ ເສຍອາກອນມູນຄ່າເພີ່ມໃນອັດຕາ ສູນ ສ່ວນຮ້ອຍ (0%); ການນຳເຂົ້າວັດຖຸດິບ, ວັດຖຸອຸປະກອນ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ງົດເກັບພາສີໃນເວລານຳເຂົ້າ ຕາມທີ່ກຳນົດໃນມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;

4. ການສົ່ງອອກຜະລິດຕະພັນຫັດຖະກຳ ຈະໄດ້ຮັບການຍົກເວັ້ນພາສີຂາອອກ, ເວັ້ນເສຍແຕ່ບາງລາຍການຜະລິດຕະພັນ ທີ່ໄດ້ກຳນົດໃຫ້ມີການເກັບພາສີຂາອອກ ຕາມທີ່ລະບຸໄວ້ໃນມາດຕາ 101 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020.

**ມາດຕາ 16 ນະໂຍບາຍດ້ານຄ່າເຊົ່າ ແລະ ສຳປະທານດິນລັດ**

ການສ້າງສູນສົ່ງເສີມຫັດຖະກຳ ຈະໄດ້ຮັບການຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານດິນລັດ ຕາມທີ່ກຳນົດໃນມາດຕາ 9 ແລະ 15 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ໂດຍໄດ້ຮັບນະໂຍບາຍຕາມເຂດ ດັ່ງນີ້:

1. ການລົງທຶນຢູ່ເຂດ 1 ຈະໄດ້ຮັບການຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານດິນລັດເຖິງ ສິບຫ້າ ປີ;
2. ການລົງທຶນຢູ່ເຂດ 2 ຈະໄດ້ຮັບການຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານດິນລັດເຖິງ ແປດ ປີ;

3. ການລົງທຶນຢູ່ເຂດ 3 ຈະໄດ້ຮັບນະໂຍບາຍ ຕາມລະບຽບການສະເພາະ.

**ມາດຕາ 17 ນະໂຍບາຍດ້ານການເຂົ້າເຖິງຂໍ້ມູນຂ່າວສານ**

ສູນສົ່ງເສີມຫັດຖະກຳ ຈະໄດ້ຮັບນະໂຍບາຍການເຂົ້າເຖິງຂໍ້ມູນຂ່າວສານຈາກຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008 ເປັນຕົ້ນ ຂໍ້ມູນຂ່າວສານກ່ຽວກັບການຜະລິດ, ການຕະຫຼາດ, ລາຄາ, ແຫຼ່ງທຶນ, ແຫຼ່ງວັດຖຸດິບ ແລະ ອື່ນໆ ດ້ວຍຮູບການສຳມະນາ ແລະ ໂຄສະນາເຜີຍແຜ່ຜ່ານຫຼາຍຊ່ອງທາງ.

## ໝວດທີ 4
## ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ

**ມາດຕາ 18 ການຄຸ້ມຄອງສູນສົ່ງເສີມຫັດຖະກຳ**

ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ, ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳ ແລະ ແຜນການເຄື່ອນໄຫວ ໃນການຄຸ້ມຄອງສູນສົ່ງເສີມຫັດຖະກຳ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບສູນສົ່ງເສີມຫັດຖະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;

3. ຄົ້ນຄວ້າພິຈາລະນາ ອອກ, ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງສູນສົ່ງເສີມຫັດຖະກຳ;

4. ເປັນເຈົ້າການຂົນຂວາຍຊອກຫາແຫຼ່ງທຶນ ແລະ ການຊ່ວຍເຫຼືອ ເພື່ອພັດທະນາສູນສົ່ງເສີມຫັດຖະກຳ;

5. ຈັດຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານທ້ອງຖິ່ນ ເພື່ອສ້າງຄວາມເຂັ້ມແຂງໃນການສົ່ງເສີມ ແລະ ຄຸ້ມຄອງສູນສົ່ງເສີມຫັດຖະກຳ;

6. ປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ໃຫ້ມີການປົກປັກຮັກສາສູນສົ່ງເສີມຫັດຖະກຳໃຫ້ຢູ່ໃນສະພາບທີ່ດີ ແລະ ນຳໃຊ້ໄດ້ເປັນປົກກະຕິ;

7. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ ໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ກຳນົດໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານການສົ່ງເສີມ ແລະ ຄຸ້ມຄອງສູນສົ່ງເສີມຫັດຖະກຳ ຕາມການແບ່ງຂັ້ນຄຸ້ມຄອງ;

2. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບສູນສົ່ງເສີມຫັດຖະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດ ແຂວງ, ນະຄອນຫຼວງ ຂອງຕົນ;

3. ຄົ້ນຄວ້າ ແລະ ຢັ້ງຢືນ ກ່ຽວກັບ ສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

4. ຊຸກຍູ້, ຕິດຕາມ, ກວດກາການກໍ່ສ້າງສູນສົ່ງເສີມຫັດຖະກຳ ໃຫ້ດຳເນີນຖືກຕ້ອງຕາມແຜນການທີ່ໄດ້ອະນຸຍາດ;

5. ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ ທີ່ສ້າງຕັ້ງຢູ່ ແຂວງ, ນະຄອນຫຼວງ ຂອງຕົນ;

6. ໂຄສະນາຂົນຂວາຍຊາວຊ່າງຫັດຖະກຳ ແລະ ຫົວໜ່ວຍຫັດຖະກຳ ເຂົ້າມາຮ່ວມຝຶກອົບຮົມທີ່ສູນສົ່ງເສີມຫັດຖະກຳ;

7. ສະເໜີ ກົມອຸດສາຫະກຳ ແລະ ຫັດຖະກຳ ພິຈາລະນາ ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງສູນຫັດຖະກຳ;

8. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງສູນສົ່ງເສີມຫັດຖະກຳ ປະຈຳ ຫົກ ເດືອນ ແລະ ປະຈຳປີ ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສູນສົ່ງເສີມຫັດຖະກຳ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານການສົ່ງເສີມ ແລະ ຄຸ້ມຄອງສູນສົ່ງເສີມຫັດຖະກຳ ຕາມການແບ່ງຂັ້ນຄຸ້ມຄອງ;

2. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບສູນສົ່ງເສີມຫັດຖະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດ ເມືອງ, ນະຄອນ ຂອງຕົນ;

3. ສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ລົງກວດກາສະຖານທີ່ຕັ້ງສູນສົ່ງເສີມຫັດຖະກຳ ທີ່ສະເໜີສ້າງຕັ້ງຢູ່ ເມືອງ, ນະຄອນ ຂອງຕົນ;

4. ສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຊຸກຍູ້, ຕິດຕາມ ແລະ ກວດກາ ການກໍ່ສ້າງສູນສົ່ງເສີມຫັດຖະກຳ ທີ່ຕັ້ງຢູ່ ເມືອງ, ນະຄອນ ຂອງຕົນ;

5. ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວຂອງສູນສົ່ງເສີມຫັດຖະກຳ ທີ່ຕັ້ງຢູ່ ເມືອງ, ນະຄອນ ຂອງຕົນ;

6. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງສູນສົ່ງເສີມຫັດຖະກຳ ປະຈຳ ທົກ ເດືອນ ແລະ ປະຈຳປີ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການ ໂດຍປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ. ຣ

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ